## ວິທີການ ກ່າວຄຳປາໄສລາຍສະເພາະ :

ປະຊາຊົນ ທົ່ວໄປຈະໄດ້ ຮັບໂອກາດຂຶ້ນ ກ່າວຄຳປາໄສຕໍ່ໜ້າສະພາ. ປະທານສະພາອາດກຳ ນົດຈຳນວນ ຜູ້ປາໄສຕາມວາລະການປະຊຸມ ຫຼື ລົດເວລາທີ່ມີຢູ່ໃຫ້ ກັບ ຜູ້ປາໄສແ ຕ່ລະ ຄົນເພື່ອ ຈັດກອງປະຊຸມໃຫ້ເໝາະ ສົມ ແລະ ເພື່ອ ຮັບປະ ກັນວ່າ ສະພາມີເວລາໃນການພິຈາລະນາ ທຸກລາຍການ.

ປະຊາຊົນ ທົ່ວໄປສາມາດສະແດງຄຳຄິດເຫັນໄດ້ພຽງ ໜຶ່ງຄຳເຫັນຕໍ່ ໜຶ່ງວາລະການປະຊຸມ.

## ການເຂົ້າຮ່ວມ Webinar (ປະຊຸມ ຜ່ານຊ່ອງທາງອອນໄລນ໌) ແລະ ການໃຫ້ປາກຄຳ ຜ່ານທາງໂທລະ ສັບ

ການປະຊຸມສະພາເມືອງ ຍັງສືບຕໍ່ ຈັດຂຶ້ນແບບສື່-ອອນໄລນ໌ໂດຍການນຳໃຊ້ແພລຕ໌ຟອມ (Zoom Webinar). ປະຊາຊົນ ທົ່ວໄປສາມາດສະແດງຄຳຄິດເຫັນ ກ່ຽວ ກັບການກຳ ນົດວະລະລາຍການ ຫຼື ໃນລະຫ ວ່າງການສະແດງຄຳຄິດເຫັນປະຊາຊົນ ທົ່ວໄປທີ່ບໍ່ແ ມ່ນວາລະ ໂດຍການເຂົ້າເຖິງກອງປະຊຸມ ຜ່ານທາງສື່-ອອນໄລນ໌ ໂດຍການໃຊ້ຄອມພິວເຕີຕັ້ງໂຕະ, ຄອມພິວເຕີ ພົກພາ ຫຼື ໂທລະ ສັບສະມາດໂຟນ ຫຼື ການໃຊ້ວິທີໂທເຂົ້າໄປໃນກອງປະຊຸມ ໂດຍໃຊ້ສະມາດໂຟນ, ໂທລະ ສັບແບບ ທົ່ວໄປ ຫຼື ໂທລະ ສັບ ບ້ານ. ຖ້າເຂົ້າຮ່ວມ ຜ່ານທາງໂທລະ ສັບ ໃຫ້ ກົດ *9 ເພື່ອ ຍົກມືຂອງ ທ່ານ ແລະ ກົດ *6 ເພື່ອເປີດສຽງຂອງ ທ່ານ

ກະ ລຸນາ ກົດລິງຄ໌ ຂ້າງ ລຸ່ມ ເພື່ອເຂົ້າ ຮ່ວມກອງປະ ຊຸມ ຜ່ານແພລຕ໌ຟອມ **Webinar**:

https://sandiego.zoomgov.com/j/1607807743

ຖ້າຫາກ ຕ້ອງການເຂົ້າ ຮ່ວມທາງໂທລະ ສັບ: ກົດ 1-669-254 5252 +

ເມື່ອໄດ້ ຮັບແ ຈ້ງເຕືອນ ໃຫ້ ປ້ອນລະ ຫັດ Webinar ID : 160 780 7743 #

## ຄຳຄິດເຫັນ ສ່ວນ ຕົວ ກ່ຽວ ກັບລາຍການວາລະການປະຊຸມ

ຜູ້ປາໄສແ ຕ່ລະ ຄົນ ຕ້ອງຍື່ນຄຳ ຮ້ອງຂໍເປັນລາຍ ລັກ ອັກສອນ (ສະລິບ ຜູ້ປາໄສ) ໃຫ້ ກັບສະໝຽນປະຈຳເມືອງໃນກອງ ປະຊຸມທີ່ ຜູ້ປາໄສ ຕ້ອງການຍາກຈະ ປາໄສ ໂດຍບອກລາຍການທີ່ພວກເຂົາ ຕ້ອງການປາໄສ. ຫ້າມ ສົ່ງສະລິບຂອງ ຜູ້ປາໄສໄປ ກ່ອນມື້ປະຊຸມ ຫຼື ຫຼັງຈາກສິ້ນສຸດການໃຫ້ປາກຄຳດ້ວຍຕົນເອງ. ການໃຫ້ປາກຄຳ ດ້ວຍ ຕົນເອງຈະ ສິ້ນ ສຸດ ກ່ອນການໃຫ້ປາກຄຳທາງສື່-ອອນໄລນ໌ຈະເລີ່ມ ຕົ້ນຂຶ້ນ. ຖ້າຫາກແ ຕ່ລະ ຄົນທີ່ມີຄວາມປາຖະໜາຢາກ ກ່າວຄຳປາໄສຕໍ່ສະພາ ຕ້ອງເຂົ້າຫາແ ທ່ນປາໄສ ແລະ ລະ ບຸ ວ່າ ພວກເຂົາເປັນ ຕົວແທນຂອງໃຜ, ຖ້າຫາກ ວ່າພວກເຂົາເປັນ ຕົວແທນຂອງ ອົງການ ຈັດຕັ້ງ ຫຼື ຂອງ ບຸກ ຄົນອື່ນ.

ຜູ້ປາໄສແ ຕ່ລະ ຄົນສາມາດປາໄສໄດ້ບໍ່ເກີນ 3 ນາທີ, ຂຶ້ນຢູ່ ກັບການກຳ ນົດເວລາຂອງ ທ່ານປະທານສະພາ ເພື່ອຈຸດປະສົງໃນການບໍລິຫານຈັດການກອງປະຊຸມ, ນອກເໜືອຈາກວ່າເວລາໃດໜຶ່ງທີ່ສະມາຊິກປະຊາຊົນທົ່ວໄປຄົນອື່ນໆທີ່ຢູ່ໃນກອງປະຊຸມໄດ້ຍົກເວລາໃຫ້ ແລະ ໄດ້ສົ່ງສະລິບຜູ້ປາໄສຍົກເວລາໃຫ້ກັບພວກເຂົາ.

ສະລຸບຜູ້ປາໄສເຫຼົ່ານີ້ຄວນຈະຖືກຍື່ນພ້ອມກັນພາຍໃນຄັ້ງດຽວໃຫ້ກັບສະໜຽນປະຈຳເມືອງ ປະທານສະພາຍັງອາດຈຳກັດການນຳສະເໜີເປັນກຸ່ມທີ່ມີສະມາຊິກຕັ້ງແຕ່ 5 ຄົນ ຫຼື ຫຼາຍກວ່ານັ້ນ ໃຫ້ເຫຼືອ 15 ນາທີ ຫຼື ໜ້ອຍກວ່າ 15 ນາທີ.

## ຄຳຄິດເຫັນປະຊາຊົນຜ່ານທາງສື່-ອອນໄລນ໌ກ່ຽວກັບລາຍການວາລະການປະຊຸມ

ປະຊາຊົນທົ່ວໄປ ອາດຈະເຂົ້າຮ່ວມກອງປະຊຸມຜ່ານທາງສື່-ອອນໄລນ໌ (ໂທລະສັບມືຖື ຫຼື ການອອນໄລນ໌ທາງອິນເຕີເນັດ) ດັ່ງທີ່ລະບຸໄວ້ໃນຂ້າງລຸ່ມ. ຖ້າຜູ້ປາໄສທີ່ຕ້ອງການສະແດງຄຳຄິດເຫັນທາງອອນໄລນ໌ ຕ້ອງເຂົ້າຄິວທາງສື່-ອອນໄລນ໌ ໂດຍຍົກມືຂອງພວກເຂົາກ່ອນທີ່ຄິວຈະປິດ. ຄິວຈະປິດລົງເມື່ອຜູ້ປາໄສທາງສື່-ອອນໄລນ໌ຄົນສຸດທ້າຍເວົ້າຈົບ ຫຼື 5 ນາທີ ຫຼັງຈາກການໃຫ້ປາກຄຳແບບເຊີ່ງໜ້າສິ້ນສຸດລົງ, ຂຶ້ນຢູ່ກັບວ່າກໍລະນີໃດຈະເກີດຂຶ້ນກ່ອນ.

ຜູ້ປາໄສແຕ່ລະຄົນອາດເວົ້າໄດ້ສູງສຸດເຖິງ 3 ນາທີ, ຂຶ້ນຢູ່ກັບການກຳນົດເວລາຂອງປະທານສະພາ ເພື່ອຈຸດປະສົງໃນການບໍລິຫານຈັດການກອງປະຊຸມ. ຜູ້ປາໄສທີ່ເຂົ້າຮ່ວມການປະຊຸມທາງສື່-ອອນໄລນ໌ ອາດຈະບໍ່ສາມາດຈັດສັນເວລາຂອງພວກເຂົາໃຫ້ກັບຜູ້ປາໄສຄົນອື່ນໄດ້ ແລະ ບໍ່ສາມາດແບ່ງປັນວິດີໂອ ຫຼື ສື່ເຄື່ອງມືຕ່າງໆທີ່ຊ່ວຍໃນການເບິ່ງເຫັນ (ເຊັ່ນ: pdf, ppt, docs) ໃນລະຫວ່າງເວລາສະແດງຄວາມຄິດເຫັນຂອງພວກເຂົາ.

**ຈົ່ງຮັບຮູ້ໄວ້ວ່າ**: ປະຊາຊົນທົ່ວໄປທີ່ຕ້ອງການໃຫ້ປາກຄຳທາງສື່-ອອນໄລນ໌ ຕ້ອງເຂົ້າຄິວທາງສື່-ອອນໄລນ໌ ໂດຍການຍົກມືພວກເຂົາຂຶ້ນກ່ອນຄິວຈະປິດ. ຄິວຈະປິດລົງເມື່ອຜູ້ປາໄສທາງສື່-ອອນໄລນ໌ຄົນສຸດທ້າຍເວົ້າຈົບ ຫຼື 5 ນາທີ ຫຼັງຈາກການໃຫ້ປາກຄຳແບບເຊີ່ງໜ້າ ສິ້ນສຸດລົງ, ຂຶ້ນຢູ່ກັບວ່າກໍລະນີໃດຈະເກີດຂຶ້ນກ່ອນ. ***ຜູ້ທີ່ເຂົ້າຮ່ວມຜ່ານທາງສື່-ອອນໄລນ໌ຈະບໍ່ສາມາດມອບເວລາໃຫ້ຜູ້ອື່ນທີ່ເຂົ້າຮ່ວມແບບເຊີ່ງໜ້າ ຫຼື ແບບຜ່ານທາງສື່-ອອນໄລນ໌ ຫຼື ແບ່ງປັນວິດີໂອ ຫຼື ສື່ເຄື່ອງມືຕ່າງໆທີ່ຊ່ວຍໃນການເບິ່ງເຫັນ. ກະລຸນາສົ່ງຜ່ານທາງແບບຟອມຄຳຄິດເຫັນທາງເວັບ web comment ເພື່ອແຈກຢາຍ.***

## ຄຳຄິດເຫັນປະຊາຊົນທົ່ວໄປທີ່ບໍ່ກ່ຽວກັບວາລະການປະຊຸມ

ທຸກວາລະສຳລັບການປະຊຸມສະພາໂດຍປົກກະຕິແລ້ວ ຈະຕ້ອງຈັດໃຫ້ມີວາລະການປະຊຸມສຳລັບປະຊາຊົນທົ່ວໄປທີ່ຈະກ່າວຄຳປາໄສເຖິງສະພາໃນເລື່ອງທີ່ປະຊາຊົນ ຫຼື ສາທາລະນະຊົນສົນໃຈ ທີ່ບໍ່ໄດ້ຢູ່ໃນວາລະການປະຊຸມ ແຕ່ຢູ່ໃນອຳນາດຂອງສະພາ. ການສະແດງຄຳຄິດເຫັນປະຊາຊົນທົ່ວໄປທີ່ບໍ່ໄດ້ຢູ່ໃນວາລະ ຈະຂຶ້ນຢູ່ກັບການໃຊ້ດູນພິນິດ ຫຼື ການຕັດສິນໃຈຂອງປະທ່ານສະພາສຳລັບວາລະທີ່ກຳນົດໄວ້.

ເພື່ອຮັບປະກັນວ່າສະພາມີເວລາໃນການພິຈາລະນາວາລະທຸກລາຍການ, ການສະແດງຄຳຄິດເຫັນຂອງປະຊາຊົນທົ່ວໄປທີ່ບໍ່ກ່ຽວກັບວາລະໃນປະເດັນສະເພາະ ແລະ ສຳລັບຜູ້ປາໄສແຕ່ລະຄົນຈະມີດັ່ງລຸ່ມນີ້:

ຜູ້ປາໄສແຕ່ລະຄົນຈະຖືກຈຳກັດເວລາໃຫ້ບໍ່ເກີນ 2 ນາທີ. ຜູ້ປາໄສບໍ່ສາມາດຈັດສັນແບ່ງປັນເວລາໃຫ້ກັບຜູ້ປາໄສຄົນອື່ນໄດ້. ຖ້າຫາກມີຜູ້ປາໄສຈຳນວນ 8 ຄົນ ຫຼື ຫຼາຍກວ່ານັ້ນທີ່ປາໄສໃນປະເດັນດຽວກັນ, ເວລາສູງສຸດສຳລັບປະເດັນນັ້ນແມ່ນ 60 ນາທີ. ລຳດັບຂອງການປາໄສໂດຍທົ່ວໄປຈະມີການກຳນົດສິດໃຫ້ຕາມລຳດັບຄືໃຜມາກ່ອນໄດ້ກ່ອນ-ຕາມລຳດັບ. ແນວໃດກໍຕາມ, ບຸລິມະສິດ (ໜ້າທີ່ທີ່ສຳຄັນ) ອາດຖືກມອບໃຫ້ກັບຜູ້ປາໄສທີ່ບໍ່ໄດ້ກ່າວເຖິງຮ່າງກົດໝາຍໃນລະຫວ່າງການສະແດງຄຳເຫັນສາທາລະນະທົ່ວໄປທີ່ບໍ່ແມ່ນວາລະໃນການປະຊຸມສະພາຕາມກຳນົດການຄັ້ງຫຼ້າສຸດ. ປະຊາຊົນທົ່ວໄປສາມາດສະແດງຄຳເຫັນທີ່ບໍ່ແມ່ນວາລະໄດ້ໜຶ່ງຄຳເຫັນຕໍ່ໜຶ່ງວາລະ.

ຖ້າຫາກຢາກສະແດງຄຳຄິດເຫັນດ້ວຍຕົວເອງ, ກະລຸນາສົ່ງສະລິບຜູ້ປາໄສ ແລະ ສື່ເຄື່ອງມືຕ່າງໆທີ່ຊ່ວຍໃນການເບິ່ງເຫັນໃຫ້ສະ ໝຽນປະຈຳເມືອງ. ການໃຫ້ປາກຄຳດ້ວຍຕົນເອງຈະສິ້ນສຸດລົງກ່ອນທີ່ການໃຫ້ປາກຄຳຜ່ານທາງສື່-ອອນໄລນ໌ຈະເລີ່ມຕົ້ນຂຶ້ນ.

ຜູ້ປາໄສທີ່ຕ້ອງການສະແດງຄຳຄິດເຫັນສາທາລະນະທົ່ວໄປຜ່ານທາງສື່-ອອນໄລນ໌ທີ່ບໍ່ແມ່ນວາລະຕ້ອງເຂົ້າຄິວສື່-ອອນໄລນ໌ ໂດຍການຍົກມືຂອງພວກເຂົາທາງສື່-ອອນໄລນ໌ກ່ອນຄິວຈະປິດລົງ. ຄິວຈະປິດລົງເມື່ອຜູ້ປາໄສທາງສື່-ອອນໄລນ໌ຄົນສຸດທ້າຍເວົ້າຈົບ ຫຼື 5 ນາທີ ຫຼັງຈາກການໃຫ້ປາກຄຳແບບເຊິງໜ້າສິ້ນສຸດລົງ, ຂຶ້ນຢູ່ກັບວ່າກໍລະນີໃດຈະເກີດຂຶ້ນກ່ອນ. ຜູ້ປາໄສທີ່ເຂົ້າຮ່ວມຜ່ານທາງສື່-ອອນໄລນ໌ ອາດຈະບໍ່ສາມາດຈັດສັນເວລາຂອງພວກເຂົາໃຫ້ກັບຜູ້ປາໄສຄົນອື່ນໄດ້ ແລະ ບໍ່ສາມາດແບ່ງປັນວິດີໂອ ຫຼື ສື່ເຄື່ອງມືຕ່າງໆທີ່ຊ່ວຍໃນການເບິ່ງເຫັນ (ເຊັ່ນ: pdf, ppt, docs) ໃນລະຫວ່າງເວລາສະແດງຄວາມຄິດເຫັນຂອງພວກເຂົາທີ່ບໍ່ແມ່ນວາລະ.

**ຈົ່ງຮັບຮູ້ໄວ້ວ່າ** : ໃນວັນຈັນ, ຊ່ວງເວລາການສະແດງຄຳຄິດເຫັນປະຊາຊົນທົ່ວໄປທີ່ບໍ່ແມ່ນວາລະແມ່ນຈະໄດ້ຈັດຂຶ້ນໃນລະຫວ່າງເວລາ 2.00 ໂມງແລງ ຫຼັງຈາກລາຍການອະພິປາຍທັງໝົດສິ້ນສຸດລົງ. ສ່ວນວັນອັງຄານ, ຊ່ວງເວລາການສະແດງຄຳຄິດເຫັນປະຊາຊົນທົ່ວໄປທີ່ບໍ່ແມ່ນວາລະການປະຊຸມແມ່ນຈະໄດ້ຈັດຂຶ້ນໃນລະຫວ່າງເວລາ 10.00 ໂມງເຊົ້າ.

**ຄຳຄິດເຫັນກ່ຽວກັບວາລະລາຍການປະຊຸມ, ຄຳຄິດເຫັນປະຊາຊົນທົ່ວໄປທີ່ບໍ່ແມ່ນວາລະການປະຊຸມ ແລະ ຄຳຄິດເຫັນປະຊາຊົນທົ່ວໄປຊ່ວງເວລາປິດ**ຈະຖືກສົ່ງ ໂດຍໃຊ້ເວັບຟອມ (webform) ທີ່ລະບຸປະເພດຄຳຄິດເຫັນ ແລະ ໝາຍເລກລາຍການ (ຖ້າຫາກກ່ຽວຂ້ອງ) ທີ່ທ່ານຕ້ອງການສົ່ງຄຳຄິດເຫັນຂອງທ່ານ. ຄຳຄິດເຫັນຈະໄດ້ຮັບ 2 ຊົ່ວໂມງກ່ອນການປະຊຸມກ່ອນຈະຖືກສົ່ງໄປສະພາເມືອງ ແລະ ຖືກໂພສ໌ລົງຜ່ານທາງອອນໄລນ໌ພ້ອມກັບເອກະສານການປະຊຸມ. ເວັບຟອມ (webform) ທັງໝົດຈຳກັດຄຳຄິດເຫັນໄດ້ພຽງແຕ່ 500 ຄຳ ແຕ່ສາມາດແນບໄຟລ໌ມານຳໄດ້. ຄຳຄິດເຫັນທີ່ໄດ້ຮັບຈາກຊ່ວງເວລາດັ່ງກ່າວ ແຕ່ກ່ອນທີ່ຈະມີການປະຊຸມ ຄຳຄິດເຫັນຈະຖືກສົ່ງໄປບັນທຶກເປັນລາຍລັກອັກສອນສຳລັບລາຍການທີ່ກ່ຽວຂ້ອງ.

**ລາຍການສຳລັບພິຈາລະນາຂໍ້ພິພາດ.**
ການຈັບກຸ່ມນຳສະເໜີສຳລັບລາຍການພິຈາລະນາຂໍ້ພິພາດຈະໄດ້ຮັບອະນຸຍາດໃຫ້ປາໄສໄດ້ສູງສຸດຝ່າຍລະບໍ່ເກີນ 15 ນາທີ ເພື່ອປາໄສ ຫຼື ຄັດຄ້ານລາຍການໜຶ່ງເປັນເວລາທັງໝົດ 30 ນາທີ. ຖ້າມີຫຼາຍກວ່າໜຶ່ງກຸ່ມໃນຝ່າຍດຽວກັນຮ້ອງຂໍໃຫ້ຈັດລະບຽບການນຳສະເໜີ, ເວລາ 15 ນາທີຈະຖືກແບ່ງລະຫວ່າງແຕ່ລະກຸ່ມສຳລັບຝ່າຍນັ້ນ.
ກະລຸນາຕິດຕໍ່ຜູ້ຈັດການໂຄງການຕາມທີ່ລະບຸລາຍຊື່ໄວ້ເປັນຜູ້ຕິດຕໍ່ຫຼັກໃນລາຍງານເຈົ້າໜ້າທີ່ສຳລັບລາຍການນັ້ນ ເພື່ອບອກຄວາມປາ ຖະໜາຂອງທ່ານທີ່ຈະນຳສະເໜີ.

**ເອກະສານທີ່ເປັນລາຍລັກອັກສອນ.**
ແທນທີ່ທ່ານຈະສົ່ງເອກະສານທີ່ເປັນລາຍລັກອັກສອນເປັນໄຟລ໌ແນບສົ່ງໄປທາງເວັບຟອມ (webform) ທ່ານອາດຈະສົ່ງຜ່ານທາງໄປສະນີ (U.S. Mail) ຂອງສະຫາລັດຝາກເຖິງສະໝຽນປະຈຳເມືອງ, ຖະໜົນ 202 C, MS2A, ເມືອງຊານດີເອໂກ, CA 92101. ເອກະສານທີ່ສົ່ງຜ່ານທາງ (U.S. Mail) ຕ້ອງໄດ້ຮັບໃນມື້ເຮັດວຽກໜຶ່ງມື້ກ່ອນການປະຊຸມ ເພື່ອແຈກຢາຍໃຫ້ກັບສະພາເມືອງ. ຄຳຄິດເຫັນທີ່ໄດ້ຮັບຜ່ານທາງ (U.S. Mail) ໃນວັນປະຊຸມຈະຖືກສົ່ງເຂົ້າໄປບັນທຶກເປັນລາຍລັກອັກສອນສຳລັບລາຍການທີ່ກ່ຽວຂ້ອງ.

ປະຊາຊົນສາມາດເບິ່ງການປະຊຸມຜ່ານທາງໂທລະພາບສາທາລະນະ (ພາຍໃນເມືອງຊານດິເອໂກເທົ່ານັ້ນ) ໃນ City TV ຊ່ອງທີ 24 ສຳລັບ Cox Communications ແລະ Spectrum ຫຼື ຊ່ອງ 99 ສຳລັບ AT&T U-Verse ຫຼື ເບິ່ງການປະຊຸມອອນໄລນ໌ຈາກ (ລິງຄ໌ການເຊື່ອມຕໍ່ຈາກພາຍນອກ)

## ລະບຽບວາລະກອງປະຊຸມ

ລະບຽບວາລະກອງປະຊຸມຈະຖືກປະຕິບັດໃນລະຫວ່າງການປະຊຸມສະພາ ບໍ່ໄດ້ລະບຸໄວ້ໃນລຳດັບລາຍການວາລະສະເໜີໄປ. ເຊິ່ງທ່ານສາມາດເບິ່ງລຳດັບລາຍການທີ່ຄາດການໄວ້ໄດ້ຈາກເອກະສານສະຫຼຸບຂອງເຮົາ ເຊິ່ງມີຈຸດປະສົງເພື່ອໃຫ້ເກີດຄວາມສະດວກສະບາຍ ຫຼື ໃຊ້ເປັນແນວທາງສຳລັບປະຊາຊົນທົ່ວໄປທີ່ຮ່ວມລາຍການທັງໝົດໄວ້ໃນເອກະສານດຽວຕາມລຳດັບລາຍການທີ່ຈະນຳເຂົ້າ. ເອກະສານສະຫຼຸບຈະຖືກໂພສໃນຕອນສວຍຂອງວັນພະຫັດ ແລະ ຖືກອັບເດດໃນຕອນສວຍວັນສຸກພ້ອມທັງລາຍການເສີມທີ່ອາດຈະຖືກເພີ່ມເຕີມເຂົ້າມາ. ເຊິ່ງທ່ານສາມາດຄົ້ນຫາໄດ້ໃນໜ້າລະບຽບວາລະຕາມລິງຄ໌ link. ຕໍ່ໄປນີ້

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການເຂົ້າຮ່ວມ ແລະ ສະແດງຄຳຄິດເຫັນກ່ຽວກັບລາຍການການປະຊຸມສະພາ ກະລຸນາກົດລິງຄ໌ຕໍ່ໄປນີ້